ສຳນັກງານ ຄຄຊ
ເລກທີ 1093
ວັນທີ 15 OCT 2019
ໂທລະສັບ 021 217779

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 40 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 11 ຕຸລາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 16-20/09/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,52% ເມື່ອທຽບໃສ່ເອີໂຣ ເນື່ອງຈາກທະນາຄານກາງຂອງສ. ອາເມລິກາ (FED) ປະກາດແຜນການກະຕຸ້ນເສດຖະກິດໂດຍການປັບຫຼຸດອັດຕາດອກເບ້ຍນະໂຍບາຍ 0,25% ຈາກ 2,00% ຫາ 2,25% ມາເປັນ 1,75% ຫາ 2,00% ຊຶ່ງເປັນການປັບຫຼຸດອັດຕາດອກເບ້ຍນະໂຍບາຍຄັ້ງທີ 2 ໃນປີນີ້. ພ້ອມກັນນັ້ນ, ຕົວເລກການປຸກສ້າງເຮືອນໃໝ່ ເພີ່ມຂຶ້ນ 12,3% ຈາກຫຼຸດລົງ 1,5% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>9-13/09/2019 | ອາທິດນີ້<br>16-20/09/2019 | ເປີເຊັນ<br>ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1108 | 1,1050 | 0,52% |
| ເຢນ/ໂດລາ | 108,02 | 108,00 | 0,02% |
| ບາດ/ໂດລາ | 30,440 | 30,46 | -0,07% |
| ເປໂຊ/ໂດລາ | 52,00 | 51,94 | 0,11% |
| ຣູເປັຍ/ໂດລາ | 13.970,00 | 14.060,00 | -0,64% |
| ໂດລາສິງກະໂປ/ໂດລາ | 1,3732 | 1,3754 | -0,16% |
| ຢວນ/ໂດລາ | 7,0834 | 7,0877 | -0,06% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ເພີ່ມຂຶ້ນ 6,99% ຈາກ 54,93 ໂດລາ/ບາເຣວ ມາເປັນ 58,77 ໂດລາ/ບາເຣວ ເນື່ອງຈາກຜົນກະທົບຈາກໄພທຳມະຊາດໃນປະເທດທີ່ຜະລິດນ້ຳມັນລາຍໃຫຍ່ຂອງໂລກເປັນຕົ້ນສ. ອາເມລິກາ ໄດ້ຮັບຜົນກະທົບຈາກ ພາຍຸ ອີເມດາ (Imelda) ຊຶ່ງເຮັດໃຫ້ເກີດນ້ຳຖ້ວມໃນລັດເທັກຊັດ ຊຶ່ງສົ່ງຜົນໃຫ້ທໍ່ ແລະ ຈຸດສົ່ງອອກນ້ຳມັນບາງແຫ່ງໄດ້ຮັບຄວາມເສຍຫາຍ ແລະ ໂຮງກັ່ນນ້ຳມັນບາງແຫ່ງໄດ້ຫຼຸດກຳລັງການຜະລິດລົງ. ພ້ອມກັນນັ້ນ, ບັນຫາຄວາມບໍ່ສະຫງົບໃນເຂດຕາເວັນອອກກາງ ທີ່ຍັງສືບຕໍ່ເພີ່ມທະວີຄວາມຮຸນແຮງຂຶ້ນເລື້ອຍໆ ພາຍຫຼັງ ສ.ອາເມລິກາ ແລະ ປະເທດຊາອຸດີອາຣະເບຍກະກຽມທີ່ຈະອອກມາດຕະການຂວ້ຳບາດປະເທດອີຫຼ່ານ ເພື່ອເປັນການຕອບໂຕ້ການໂຈມຕີໂຮງງານນ້ຳມັນໃນປະເທດຊາອຸດີອາຣະເບຍ ຊຶ່ງສົ່ງຜົນໃຫ້ລາຄານ້ຳມັນໄດ້ຮັບແຮງກົດດັນຈາກເຫດການດັ່ງກ່າວ.

- ລາຄາຄຳ ຫຼຸດລົງ 0,19% ຈາກ 1.506,67 ໂດລາ/ອອນ ມາເປັນ 1.503,79 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າຂຶ້ນ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ.

**2. ສະພາບເງິນຕາພາຍໃນ**

**2.1 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 09/2019 ຄາດວ່າຈະຢູ່ໃນລະດັບ 3,89%.

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,61% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,49%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,04% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,12%.

**2.3 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,68% ແລະ ແຂງຄ່າຂຶ້ນ 0,13% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 3,44% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 10,24% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 9-13/09/2019 | | | ອາທິດນີ້ 16-20/09/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.969,55 | 8.993,74 | 8.982,53 | 8.908,39 | 8.934,67 | 8.921,74 | 0,69% | 0,66% | 0,68% | -3,44% | -3,44% | -3,44% |
| ບາດ | 296,59 | 298,59 | 297,86 | 296,56 | 298,61 | 297,47 | 0,01% | -0,01% | 0,13% | -10,24% | -10,43% | -10,24% |

**2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (13-19/09/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ເງິນໂດລາຊື້ສຸດທິ 1,41 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 27,67 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 26,26 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 380,60 ລ້ານບາດ (ໃນນີ້ຊື້

[1] % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ເງິນບາດໄດ້ 317,65 ລ້ານບາດ ແລະ ຂາຍເງິນບາດໄດ້ 698,25 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 24,90% ແລະ ເງິນບາດ ເພີ່ມຂຶ້ນ 29,67%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໃຫ້ ທທກ ໂດຍການຂາຍເງິນໂດລາ ຈຳນວນ 3,28 ລ້ານໂດລາ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ເປັນເງິນໂດລາ ຈຳນວນ 1,10 ລ້ານໂດລາ ແລະ ເປັນ ເງິນບາດ ຈຳນວນ 84,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 6/09-12/09/2019 | | ອາທິດນີ້ 13/09-19/09/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **20,96** | **120,02** | **27,67** | **317,65** | **46,71%** | **42,26%** |
| - ທ/ຄທຸລະກິດລັດ | 7,89 | 20,93 | 8,65 | 35,24 | 27,77% | -14,34% |
| - ທ/ຄທຸລະກິດອື່ນໆ | 13,07 | 99,09 | 19,02 | 282,41 | 57,32% | 55,04% |
| **2. ການຂາຍເງິນຕາຕ່າງປະເທດ** | **14,35** | **360,95** | **26,26** | **698,25** | **7,98%** | **24,65%** |
| - ທ/ຄທຸລະກິດລັດ | 7,12 | 100,60 | 10,98 | 117,30 | -23,22% | -55,48% |
| - ທ/ຄທຸລະກິດອື່ນໆ | 7,23 | 260,35 | 15,28 | 580,95 | 52,50% | 95,82% |
| **ຊື້-ຂາຍສຸດທິ ທທກ** | **6,61** | **-240,93** | **1,41** | **-380,60** | **-125,82%** | **12,98%** |
| - ຜົດຕ່າງຊື້-ຂາຍ | 31,54% | -200,74% | 5,10% | -119,82% | -117,60% | -20,58% |
| **- ມູນຄ່າການຊື້-ຂາຍ** | **35,31** | **480,97** | **53,93** | **1,015,90** | **24,90%** | **29,67%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-1,13** | **-24,08** | **-3,28** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,13 | 24,08 | 3,28 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **0,87** | **75,20** | **1,10** | **84,00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (13-19/09/2019) ຈຳນວນ 23,40 ລ້ານໂດລາ. ໃນນັ້ນ, ກະແສເງິນເຂົ້າມີຈຳນວນ 243,76 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 122,59 ລ້ານໂດລາ, ຖອນເງິນຝາກຈາກສະຖາບັນການເງິນຕ່າງປະເທດ ຈຳນວນ 106,63 ລ້ານໂດລາ ແລະ ລາຍຮັບອື່ນໆ 6,08 ລ້ານໂດລາ. ສ່ວນກະແສເງິນໄຫຼອອກ ຈຳນວນ 220,36 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 99,14 ລ້ານໂດລາສະຫະລັດ, ໂອນເງິນຝາກກັບສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 104,62 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 10,16 ລ້ານໂດລາສະຫະລັດ.

3. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 592 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 47 ສະບັບ, ລວມມູນຄ່າໂອນທັງໝົດ 244,06 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 60,86 ຕື້ກີບເທົ່າກັບ 33,22%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (13-19/9/2019) ມີທັງໝົດ 4.252 ຄັ້ງ ເພີ່ມຂຶ້ນ 10 ຄັ້ງທຽບໃສ່ອາທິດທີ່ຜ່ານມາ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.308,74 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ເພີ່ມຂຶ້ນ 646,01 ຕື້ກີບ ຫຼື ເທົ່າກັບ 97,47%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 123 ຄັ້ງ, ລວມມູນຄ່າໂອນທັງໝົດ 122,35 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນເງິນ 99,63 ຕື້ກີບ ເທົ່າກັບ 438,46%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 743,77 ຈຸດ ເພີ່ມຂຶ້ນ ຈາກ 701,97 ຈຸດ ຫຼື ເທົ່າກັບ 0,96% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 213.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,09 ຕື້ກີບ ຫຼຸດລົງ 46,48% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 6,48% ເຊິ່ງສະແດງໃຫ້ເຫັນວ່າຜູ້ລົງທຶນທີ່ມີບົດບາດໃນການຊື້-ຂາຍຂອງອາທິດນີ້ ຍັງແມ່ນຜູ້ລົງທຶນພາຍໃນປະເທດດ້ວຍກັນເປັນສ່ວນໃຫຍ່ ໂດຍສະເພາະການເທຂາຍຮຸ້ນຂອງ BCEL. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ໃນອາທິດນີ້ແມ່ນມາຈາກການຫຼຸດລົງຂອງລາຄາຮຸ້ນ EDL-GEN ແລະ VCL.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ (6-12/9/2019) | | | ອາທິດນີ້ (13-19/9/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| BCEL | 321.900 | 1.917.745.000 | 6.050 | 155.300 | 922.435.000 | 6.050 | -51.76 | -51,90 | - |
| EDL-GEN | 32.600 | 104.161.000 | 3.290 | 47.200 | 162.649.000 | 3.550 | 44.79 | 56.15 | 7.90 |
| LWPC | - | - | 7.150 | - | - | 7.150 | - | - | - |
| PTL | 2.900 | 1.309.500 | 495 | 2.500 | 1.237.500 | 490 | 13.79 | -5,50 | -1,01 |
| SVN | 3.800 | 7.980.000 | 2.100 | 2.600 | 5.460.000 | 2.100 | -31.58 | -31,58 | - |
| PCD | - | - | 860 | - | - | 860 | - | - | - |
| LCC | - | - | 2.100 | 100 | 210.000 | 2.100 | - | - | - |
| MHTL | 6.300 | 17.805.000 | 2.950 | 200 | 590.000 | 2.900 | -96.83 | -96,69 | 1,69 |
| LAT | 200 | 165.000 | 800 | 500 | 400.000 | 800 | 150.00 | 142.42 | - |
| VCL | 3.100 | 2.945.000 | 950 | 5.500 | 5.320.000 | 1.040 | 77.42 | 80.65 | 9.47 |
| ທັງໝົດ | 370.800 | 2.052.110.500 | | 213.900 | 1.098.301.500 | | -42.31 | -46,48 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການຄົ້ນຄວ້າບົດລາຍງານຈຳນວນໜຶ່ງເປັນຕົ້ນ: ❶ບົດສະຫຼຸບແຜນເງິນຕາປະຈຳ 09 ເດືອນຕົ້ນປີ 2019 ແລະ ທິດທາງແຜນການປີ 2020 ແລະ ❷ບົດລາຍງານ ກ່ຽວກັບຄວາມຈຳເປັນທີ່ຕ້ອງນຳເອົາພັນທະບັດລັດຖະບານ ເຂົ້າຄິດໄລ່ໃນເງິນແຮຝາກບັງຄັບ.

- **ທຫລ ໄດ້ເຂົ້າຮ່ວມກອງປະຊຸມທີ່ສຳຄັນຕ່າງໆເປັນຕົ້ນ:** ❶ກອງປະຊຸມສ່ອງແສງລາຍງານຕໍ່ຄະນະເລຂາທິການສູນກາງພັກ; ❷ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ກັນຍາ 2019; ❸ກອງປະຊຸມປຶກສາຫາລືສະພາບໄພພິບັດນ້ຳຖ້ວມ ໃນຂອບເຂດທົ່ວປະເທດ ປີ 2019 ແລະ ທິດທາງແກ້ໄຂ; ❹ກອງປະຊຸມປຶກສາຫາລືກ່ຽວກັບການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ; ❺ກອງປະຊຸມກ່ຽວກັບວຽກງານການຂໍຂຶ້ນທະບຽນວິສາຫະກິດ; ❻ກອງປະຊຸມປຶກສາກ່ຽວກັບການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ທີ່ເຮັດຄັງແຮເຂົ້າແຊກແຊງລາຄາ ແລະ ດັດສົມຕະຫຼາດ ປີ 2018; ❼ພິທີເປີດສຳນັກງານໃຫຍ່ທະນາຄານຫວຽດຕິນ ປະຈຳ ສປປ ລາວ ແລະ ❽ງານວາງສະແດງເປີດໂລກແຫ່ງການລົງທຶນ ປະຈຳປີ 2019.

- **ທຫລ ໄດ້ສຳເລັດການຈັດກອງປະຊຸມຈຳນວນໜຶ່ງຄື:** ❶ກອງປະຊຸມທະວິພາຄີລະຫວ່າງ ທຫລ ແລະ ທະນາຄານແຫ່ງລັດຫວຽດນາມ; ❷ກອງປະຊຸມປຶກສາຫາລືກ່ຽວກັບໂຄງການສະໜັບສະໜູນການຂ້າມຜ່ານສູ່ມາດຕະຖານລາຍງານການເງິນສາກົນ (IFRS); ❸ກອງປະຊຸມກະກຽມການປະເມີນຮອບດ້ານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❹ກອງປະຊຸມຮ່ວມກັບ 05 ທະນາຄານຕົວແບບໃນການຫັນການຄຸ້ມຄອງທະນາຄານທຸລະກິດໄປສູ່ຫຼັກການບາເຊວ 02; ❺ກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນກ່ຽວຂ້ອງຕິດພັນກັບບັນຫາ ແລະ ອຸປະສັກອຸດຕັນຕໍ່ການເຂົ້າມາລົງທຶນຢູ່ ຕລຊລ ຂອງຜູ້ລົງທຶນ ສປ. ຈີນ; ❻ກອງປະຊຸມກະກຽມເຮັດວຽກກັບອົງການກວດສອບແຫ່ງລັດ ທີ່ຈະມາກວດສອບ ທຫລ ປະຈຳປີ 2018; ❽ເຜີຍແຜ່ລະບົບລາຍງານການແຈ້ງເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນຂອງບຸກຄົນໃນເວລາເຂົ້າ-ອອກ ສປປ ລາວ ທາງເອເລັກໂຕຼນິກໃຫ້ກັບເຈົ້າໜ້າທີ່ປະຈຳດ່ານສາກົນ ແຂວງຫຼວງນ້ຳທາ ແລະ ແຂວງບໍ່ແກ້ວ ແລະ ❾ພິທີເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ທຫລ ກັບ ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການເງິນກູ້ຈາກທະນາຄານພັດທະນາແຫ່ງຊາດຈີນ (CDB) ເພື່ອສົ່ງເສີມ SMEs.

- **ທຫລ ໄດ້ສຳເລັດການຕ້ອນຮັບເຂົ້າຢ້ຽມຂໍ່ານັບ:** ❶ຈາກຄະນະຊ່ຽວຊານກອງເລຂາກຸ່ມອາຊີ-ປາຊີຟິກ ເພື່ອຕ້ານການຟອກເງິນ APG ແລະ ❷ຄະນະຜູ້ອຳນວຍການທະນາຄານມາຣູຮານ ເຈແປນລາວ ຈຳກັດ.

- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ສຳເລັດອອກຂໍ້ຕົກລົງວ່າດ້ວຍປະເພດເອກະສານມີຄ່າທີ່ສາມາດດຳເນີນທຸລະກຳໃນຕະຫຼາດຂັ້ນສອງກັບທະນາຄານແຫ່ງ ສປປ ລາວ ແລະ ປະເພດເອກະສານມີຄ່າທີ່ສາມາດຄິດໄລ່ເຂົ້າໃນເງິນແຮຝາກບັງຄັບ; ❷ດຳເນີນມາດຕະການບໍລິຫານໂດຍການກ່າວເຕືອນຕໍ່ຮ້ານແລກປ່ຽນຈຳນວນ 05 ຮ້ານທີ່ບໍ່ປະຕິບັດຕາມລະບຽບທີ່ ທຫລ ວາງອອກ; ❸ສຳເລັດການຄົ້ນຄວ້າຮັບຮອງບໍລິສັດ ເຄເຄລາວ ປະເມີນມູນຄ່າຊັບສິນຈຳກັດ ເພື່ອເຄື່ອນໄຫວປະເມີນມູນຄ່າຊັບສິນໃນວຽກງານຫຼັກຊັບ; ❹ອອກແຈ້ງການເຖິງບັນດາສະມາຊິກຕະຫຼາດລະຫວ່າງທະນາຄານກ່ຽວກັບການຈັດຕັ້ງປະຕິບັດການຊື້-ຂາຍເງິນກີບ/ຢວນໃນໂປຣແກຣມຕະຫຼາດລະຫວ່າງທະນາຄານ ແລະ ແຈ້ງການເຖິງບັນດາທະນາຄານທຸລະກິດ ເພື່ອສະໜອງຂໍ້ມູນເງິນກູ້ທີ່ຕິດພັນກັບການຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນເສຍຫາຍຈາກໄພພິບັດ; ❺ສຳເລັດການລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກປະຈຳປີ 2018 ຈຳນວນທັງໝົດ 02 ແຫ່ງຄື: ແອວເອທີ ແລະ ຄາພູວົງຊັບ ແລະ ເຫັນດີໃຫ້ບໍລິສັດ ສີສະຫວັດ ເຊົ່າສິນເຊື່ອ (ລາວ) ຈຳກັດ ໂຈະໜ່ວຍ

ບໍລິການຂອງຕົນ ແລະ ❻ແຈ້ງຕອບອະນຸຍາດໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເປີດໃຫ້ບໍລິການຊຳລະດ້ວຍ QR Code ຜ່ານ UnionPay QR, Wechat Pay ແລະ Alipay.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ຄຸ້ມຄອງອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ. ພ້ອມທັງ, ຕິດຕາມສະພາບລາຄານ້ຳມັນຢູ່ພາຍໃນ ແລະ ສາກົນ, ຄ່າເງິນ ແລະ ເສດຖະກິດຂອງ ສປປ ລາວ ແລະ ລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ ພ້ອມທັງສືບຕໍ່ດຳເນີນມາດຕະການບໍລິຫານຕໍ່ຮ້ານແລກປ່ຽນທີ່ບໍ່ປະຕິບັດຕາມລະບຽບການທີ່ວາງອອກ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ຕາມແຜນທີ່ກຳນົດໄວ້; ເກັບກຳຂໍ້ມູນທາງການເງິນຂອງທະນາຄານທຸລະກິດ ປະຈຳເດືອນ 08/2019 ແລະ ຂຽນບົດວິເຄາະຖານະການເງິນຕາມຄວາມສ່ຽງປະຈຳໄຕມາດ I ແລະ II/2019.
- ສືບຕໍ່ເຮັດວຽກກັບຊ່ຽວຊານກອງທຶນການເງິນສາກົນ (IMF) ພາຍໃຕ້ການມາຊ່ວຍເຫຼືອດ້ານວິຊາການໃນການພັດທະນາຄູ່ມືການຄຸ້ມຄອງຕາມຄວາມສ່ຽງ.
- ກະກຽມອອກຈຳໜ່າຍພັນທະບັດອອມຊັບ ທຫລ ເປັນສະກຸນເງິນໂດລາສະຫະລັດໃນວົງເງິນຈຳນວນ 500 ລ້ານໂດລາສະຫະລັດ.

- **ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກຄື:** ❶ກອງປະຊຸມລາຍງານຫົວຂໍ້ທີ່ຕິດພັນກັບກອງປະຊຸມກົມການເມືອງສູນກາງພັກໃນທ້າຍເດືອນກັນຍາ 2019; ❷ກອງປະຊຸມລັດຖະບານສະໄໝສາມັນປະຈຳເດືອນ ກັນຍາ 2019; ❸ກອງປະຊຸມ ເພື່ອລາຍງານສະພາບການເຄື່ອນໄຫວຂອງບັນດາລັດວິສາຫະກິດ, ວິສາຫະກິດປະສົມ ໂດຍການໂອ້ລົມຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ; ❹ກອງປະຊຸມສຳມະນາລະດັບສູງ SEACEN-BIS ແລະ ກອງປະຊຸມປະຈຳປີຄະນະບໍລິຫານ SEACEN EXCO ຢູ່ ປະເທດ ສີລັງກາ ແລະ ❺ເຂົ້າຮ່ວມງານມະຫາກຳວາງສະແດງສິນຄ້າ ແລະ ກອງປະຊຸມສຸດຍອດທຸລະກິດ ແລະ ການລົງທຶນຈີນ-ອາຊຽນ ຄັ້ງທີ 16 ແລະ ກອງປະຊຸມສຸດຍອດການຮ່ວມມືດ້ານການເງິນ ແລະ ເປີດກວ້າງການພັດທະນາທາງດ້ານການເງິນສຳລັບບັນດາປະເທດອາຊຽນ ຄັ້ງທີ 11 ຢູ່ ປະເທດ ສປ. ຈີນ.

- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆເປັນຕົ້ນ:** ❶ກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດກົນໄກການຫັນລະບົບການຊຳລະສະສາງແຊັກເປັນທັນສະໄໝຮ່ວມກັບທະນາຄານທຸລະກິດ ແລະ ບັນດາສາຂາ ທຫລ ແຕ່ລະພາກ; ❷ກອງປະຊຸມຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດປະເມີນຜົນການປະຕິບັດວຽກງານຂອງພະນັກງານ ທຫລ ປະຈຳປີ 2018; ❸ກອງປະຊຸມສະພາບໍລິຫານສຳນັກງານປົກປ້ອງເງິນຝາກ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2019; ❹ກອງປະຊຸມຄະນະຄົ້ນຄວ້າປັບປຸງນິຕິກຳ ແລະ ກົນໄກ ເພື່ອຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ FDI & ການຄ້າລະຫວ່າງປະເທດ; ❺ກອງປະຊຸມຮ່ວມກັບປະທານອົງການກວດສອບແຫ່ງລັດ ທີ່ຈະມາກວດສອບເອກະສານລາຍງານການເງິນຂອງ ທຫລ ປະຈຳປີ 2018; ❻ພິທີແຂ່ງກິລາ ເພື່ອສະເຫຼີມສະຫຼອງ

ຄົບຮອບ 20 ປີ ຂອງການສ້າງຕັ້ງ ສຳນັກງານປົກປ້ອງເງິນຝາກ ແລະ ພິທີແຂ່ງຂັນກິລາເປຕັງ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 51 ປີ.  ພ້ອມກັນນັ້ນ, ຊາວໜຸ່ມຮາກຖານ ທຫລ ກະກຽມເຄື່ອນໄຫວຂະບວນການວິຊາສະເພາະໃນຫົວຂໍ້: ວຽກງານຕະຫຼາດຫຼັກຊັບການລະດົມທຶນຈາກມວນຊົນຢູ່ ສປປ ລາວ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.

- ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກຄະນະຊ່ຽວຊານຈາກກອງທຶນການເງິນສາກົນ (IMF).

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ